# ການກໍ່ສ້າງຮຽນປະຖົມສົມບູນ
# ບ້ານນ້ຳຍອນ ເມືອງ ແມດ ແຂວງວຽງຈັນ ສຳເລັດແລ້ວ 80%

ການກໍ່ສ້າງໂຮງຮຽນ ປະຖົມສົມບູນບ້ານນ້ຳຍອນ ຕັ້ງຢູ່ເມືອງ ແມດ ແຂວງວຽງຈັນ ທີ່ເປັນອາຄານຮຽນ 01 ຫຼັງ ມີ 5 ຫ້ອງຮຽນ ແລະ 1 ຫ້ອງການ ຕົວອາຄານມີຄວາມຍາວທັງໝົດ 42 ແມັດ, ກວ້າງ 8 ແມັດ, ໂດຍ ແມ່ນ **ບໍລິສັດ ວຽງໄຊ ດວງປັນຍາ ກໍ່ສ້າງ ຄົບວົງຈອນ ຈຳກັດຜູ້ດຽວ** ເປັນຜູ້ຮັບເໝົາກໍ່ສ້າງ ຮູບແບບລົງທຶນກ່ອນ ມູນຄ່າສັນຍາທັງໝົດ **502,438,863 ກີບ** (ຫ້າຮ້ອຍສອງລ້ານ ສີ່ແສນສາມສິບແປດພັນ ແປດຮ້ອຍຫົກສິບສາມກີບ). ໂຄງການດັ່ງກ່າວແມ່ນໄດ້ເລີ່ມດຳເນີນການກໍ່ສ້າງມາແຕ່ຕົ້ນເດືອນ 04/2015 ເປັນ ຕົ້ນມາ, ໃນນັ້ນ ທຶນສົມທົບຈາກ ທຄຕລ 50% ຂອງມູນຄ່າທັງໝົດ.



ໃນວັນທີ **03/09/2015** ໄດ້ມີການກວດວຽກຄັ້ງທີ 1, ການກວດກາຄັ້ງນີ້ໂດຍມີຕາງໜ້າຄະນະກວດກາຈາກ 8 ພາກ ສ່ວນເຂົ້າຮ່ວມຄື: ຕາງໜ້າຈາກຫ້ອງວ່າການເມືອງແມດ, ຫ້ອງການສຶກສາທິການ ແລະ ກິລາເມືອງແມດ, ຫ້ອງການແຜນການ ແລະ ການລົງທຶນເມືອງແມດ, ຫ້ອງການ ຍທຂ ເມືອງແມດ, ຫ້ອງການການເງິນເມືອງແມດ, ນາຍບ້ານໆນ້ຳຍອນ, ຫົວໜ້າໝວດໂຮງໂຮງປະຖົມສົມບູນບ້ານນ້ຳຍອນ ແລະ ຕາງໜ້າກຳມະບານຮາກຖານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ສຳນັກງານໃຫຍ່ ສົມທົບ ສາຂາວັງວຽງ) ໄດ້ເຂົ້າຮ່ວມການກວດວຽກໃນຄັ້ງນີ້; ຜົນການກວດກາໂຄງການຕົວຈິງເຫັນໄດ້ວ່າ ວິຊາການ ແລະ ຄະນະກຳມະການທີ່ໄດ້ຮັບມອບໝາຍໄດ້ຕີລາຄາ, ຮັບຮອງເອົາ ຕົວອາຄານໂຮງຮຽນສຳເລັດແລ້ວ 80%, ສ່ວນທີ່ເຫຼືອ 20% ທີ່ບໍລິສັດຜູ້ຮັບເໝົາຕ້ອງໄດ້ສືບຕໍ່ປະຕິບັດລວມມີ: ວຽກຕິດຕັ້ງເພດານ, ບານປະຕູ-ປ່ອງຢ້ຽມ, ວຽກທາສີ, ຕິດຕັ້ງໂຕະຕັ່ງ, ອຸປະກອນການສຶກສາ.



ຈາກຜົນການກວດກາວຽກຄັ້ງນີ້ **ທ່ານ ວຽງໄຊ ອິນທະວົງສາ** ເຈົ້າຂອງບໍລິສັດຜູ້ຮັບເໝົາກໍ່ສ້າງ ໃຫ້ຮູ້ວ່າໂຄງການດັ່ງກ່າວແມ່ນຈະໃຫ້ສຳເລັດ 100% ພາຍໃນເດືອນ 09/2015 ນີ້ຕາມກຳນົດສັນຍາທີ່ໄດ້ຮັບ ແລະ ພ້ອມທີ່ຈະໃຫ້ນຳໃຊ້ສຳລັບການຮຽນ ການສອນ ໃຫ້ທັນເດືອນ 10/2015.

ໂດຍ: ສົມບູນ ສຸລິວັນ